

# ຟາມປະສົມໜຶ່ງດຽວ

ຂ້າພະເຈົ້າຊື່ ນາງ ຈັນດາລາ ພົມມະສອນ, ອາຍຸ 22 ປີ. ຈົບປະລິນຍາຕີ, ສາຂາປ້ອງກັນພືດ. ຂ້າພະເຈົ້າ ເຂົ້າຮ່ວມກິດຈະກຳ ຍ້ອນວ່າຮຽນກ່ຽວກັບກະສິກຳມາ ແລະ ກ່ອນຮຽນຈົບໄດ້ວາງແຜນຢາກປັບປຸງວິທີການ ແລະ ຂະຫຍາຍສວນຜັກທີ່ ພໍ່ - ແມ່ ເຮັດມາກ່ອນໃຫ້ເປັນລະບົບ, ສາມາດເປັນອາຊີບທີ່ສ້າງລາຍໄດ້ ແລະ ໝັ້ນຄົງໃຫ້ແກ່ຄອບຄົວ.

## ທຶນທີ່ໄດ້ຮັບ:

ທຶນທີ່ໄດ້ຮັບແມ່ນ 10,000,000 ກີບ (ສິບລ້ານກີບຖ້ວນ).

## ປະເພດທຸລະກິດ:

ທຸລະກິດທີ່ເຮັດແມ່ນ ປູກຜັກອິນຊີ, ລ້ຽງປານິນ ແລະ ລ້ຽງກົບຂາຍ, ທີ່ເລືອກເຮັດທຸລະກິດນີ້ກໍ່ເປັນຍ້ອນວ່າ ຜັກອິນຊີ ເປັນສິ່ງທີ່ກຳລັງໄດ້ຮັບຄວາມນິຍົມ, ສ່ວນກົບ ແລະ ປາ ກໍ່ເປັນອາຫານທີ່ຕະຫຼາດມີຄວາມຕ້ອງການຢູ່ແລ້ວ.

## ການນຳໃຊ້ທຶນ:

ທຶນທີ່ໄດ້ມາແມ່ນ ໄດ້ນຳມາ ປັບດິນ ເພື່ອຂະຫຍາຍ ສວນຜັກໃຫ້ກວ້າງຂຶ້ນ, ຊື້ອຸປະກອນລ້ອມຮົ້ວສວນ, ປັບປຸງລະບົບນ້ຳ-ໄຟຟ້າ, ຊື້ປານ້ອຍ, ຊື້ກົບນ້ອຍມາລ້ຽງ ແລະ ຊື້ແນວພັນຜັກ.

## ຈຸດດີ ແລະ ສິ່ງທ້າທາຍ:

ສິ່ງທ້າທາຍໃນການເຮັດທຸລະກິດນີ້ແມ່ນ ການຮັບມືກັບແມງໄມ້ທີ່ມາທຳລາຍຜັກ ຍ້ອນວ່າ ເປັນການປູກແບບອິນຊີ ວິທີການປ້ອງກັນສັດຕູພືດອາດຈະບໍ່ໄດ້ຮັບຜົນສູງເທົ່າກັບການໃຊ້ສານເຄມີ.

## ເປົ້າໝາຍ:

ໃນປີ 2020 ຂອງຂ້າພະເຈົ້າແມ່ນ ຈະຕັ້ງໃຈ ປູກຜັກຂາຍໃຫ້ໄດ້ 1,536 ກິໂລ, ລ້ຽງປາຂາຍ 80 ກິໂລ ແລະ ຂາຍກົບ 50 ກິໂລ.

## ຜົນໄດ້ຮັບ:

ແຕ່ຕົ້ນເດືອນ ມັງກອນ - ມິຖຸນາ 2020, ຂາຍຜັກໄດ້ 366 ກິໂລ ແລະ ສາລີ 82 ກິໂລ. ເງິນທັງໝົດທີ່ໄດ້ຮັບຈາກການຂາຍ 5,001,000 ກີບ. ລູກຄ້າແມ່ນຄົນທີ່ມາເລາະຕະຫຼາດ, ຄົນຮູ້ຈັກ ແລະ ລູກຄ້າທີ່ເຫັນສິນຄ້າໃນເຟສບຸກ ເພາະໄດ້ໄປນັ່ງຂາຍໃນທຸກໆຕອນເຊົ້າ ທີ່ມີສິນຄ້າ.









ສົນໃຈຕິດຕໍ່: ເບີໂທ ຫຼື ວັອດແອັບ: 020 28247695, ເຟສບຸກ: ຟາມປະສົມໜຶ່ງດຽວ, ບ້ານປອນ, ເມືອງ ແປກ, ແຂວງ ຊຽງຂວາງ